# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດທີ 6 ພຶສຈິກາ 2016 (11- 06- 2016)

## ໂອກາດທີ່ບໍ່ສາມາດຢຸດຢັ້ງໄດ້

ດົນປານໃດແລ້ວ "ໂອກາດ" ທີ່ທ່ານມີ ໄດ້ປ່ຽນແປງຊີວິດຂອງທ່ານ?

**ຈຸດສຳຄັນໃນບົດຮຽນ**: ໃນແຕ່ລະວັນພວກເຮົາເດີນສວນທາງກັນກັບບຸກຄົນທີ່ຕ້ອງການພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ໃນຕົ້ນປີ 1970, ບຽວ ເຟີນານເດ ມີເພື່ອນຢູ່ສອງຄົນຊື່ດຽວກັນຄືສະຕີບ. ຂະນະທີ່ເດີນອ້ອມຮອບເພື່ອນບ້ານໃກ້ຄຽງກັບເພື່ອນຄົນນຶ່ງໃນຕອນທ່ຽງ, ບຽວໄດ້ເຫັນເພື່ອນສະຕີບອີກຄົນນຶ່ງກຳລັງລ້າງຣົດຂອງລາວຢູ່. ມັນເປັນໂອກາດທີ່ດີທີ່ຈະແນະນຳເພື່ອນຂອງລາວທັງສອງຄົນໃຫ້ຮູ້ຈັກກັນ.

ແລະນັ້ນຄືວິທີທີ່ ສະຕີບ ຈອບສ໌ແລະສະຕີບ ໂວສນີເອັກ ໄດ້ພົບກັນຢ່າງໃດ ທັງສອງສນິດສນົມກັນຢ່າງໄວວາ, ທັງສອງມີຄວາມສົນໃຈໃນເຣື່ອງເທັກໂນໂລຢີ. ປີນຶ່ງຜ່ານໄປ, ເຂົາເຈົ້າໄດ້ຮ່ວມກັນເປີດບໍຣິສັດນ້ອຍຂຶ້ນທີ່ເອີ້ນວ່າ ເອັບໂປລ. ການບັງເອີນທີ່ພົບກັນໄດ້ນຳໄປສູ່ການສ້າງຕັ້ງບໍຣິສັດທີ່ມີຊື່ສຽງດີ ມີຄຸນຄ່າສູງທາງດ້ານທຸຣະກິດ!

ໂຈະໄວ້ບຶດນຶ່ງ. ພົບກັນໂດຍບັງເອີນແມ່ນບໍ່? ໃນຖານະທີ່ເປັນຜູ້ຕິດຕາມພຣະເຢຊູຄຣິດ, ຂ້າພະເຈົ້າລັ່ງເລໃຈທີ່ຈະເອີ້ນວ່າການພົບກັບຄົນອື່ນເປັນການ "ພົບກັນໂດຍບັງເອີນ" ເທົ່ານັ້ນ. ການພົບກັນທີ່ບໍ່ໄດ້ວາງແຜນລ່ວງໜ້າກ່ອນອາດຈະເປັນ "ການນັດໝາຍຂອງພຣະເຈົ້າ" ກໍເປັນໄດ້ ເປັນໂອກາດທີ່ສາມາດປ່ຽນແປງທິດທາງຂອງການດຳເນີນຊີວິດ.

ໃນກິຈການບົດ 3, ເປໂຕແລະໂຢຮັນໄດ້ສວຍເອົາໂອກາດຂອງທີ່ພົບກັນໂດຍບໍ່ໄດ້ວາງແຜນ ເພື່ອເຮັດບາງສິ່ງທີ່ອັສຈັນສຳລັບພຣະເຈົ້າ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

## ສຶກສາພຣະຄັມພີ

**1. <u>ກິຈການ 3:1-4</u>:**

*[1]ຝ່າຍເປໂຕກັບໂຢຮັນກຳລັງຂຶ້ນໄປຈະເຂົ້າບໍຣິເວນພຣະວິຫານເປັນຍາມອ້ອນວອນຄືເວລາເກົ້າໂມງ [2]ມີຊາຍຄົນນຶ່ງເປັນງ່ອຍຕັ້ງແຕ່ຢູ່ໃນທ້ອງແມ່ ຊຶ່ງເຂົາເຄີຍຫາມມາວາງໄວ້ທຸກວັນທີ່ຮີມປະຕູບໍຣິເວນພຣະວິຫານ ຊຶ່ງມີຊື່ວ່າປະຕູງາມ ເພື່ອໃຫ້ຂໍທານຈາກຄົນທີ່ເຂົ້າໄປໃນບໍຣິເວນພຣະວິຫານນັ້ນ. [3]ເມື່ອຄົນນັ້ນເຫັນເປໂຕກັບໂຢຮັນຈະເຂົ້າໄປໃນບໍຣິເວນພຣະວິຫານກໍຂໍທານ. [4]ຝ່າຍເປໂຕກັບໂຢຮັນກໍເພ່ງເບິ່ງຄົນນັ້ນບອກວ່າ " ຈົ່ງເບິ່ງພວກເຮົາ."*

ເປໂຕແລະໂຢຮັນໄດ້ວຸ້ນວາຍຢູ່ກັບການປະກາດຂ່າວປະເສີດໃນບໍຣິເວນທາງຄົບໃນກຸງເຢຣູຊາເລັມ. ສາມໂມງຫຼັງຈາກທ່ຽງວັນແມ່ນເປັນເວລານຶ່ງທີ່ກຳນົດໄວ້ສຳລັບນອະທິຖານໃນແຕ່ລະວັນ; ແລະເປັນເວລາທີນຶ່ງຂອງສອງຄັ້ງ

ໃນການຖວາຍເຄື່ອງບູຊາແຕ່ລະວັນ. ເພາະສະນັ້ນ, ມັນເປັນເວລາທີ່ວຸ້ນວາຍໃນບໍລິເວນພຣະວິຫານກັບຝູງຄົນທີ່ເຂົ້າມາອະທິຖານແລະການຖວາຍບູຊາ.

ກ່ອນຈະເຖິງເວລາ, ເປໂຕແລະໂຢຮັນໄດ້ເຫັນຊາຍເປັນງ່ອຍຄົນນຶ່ງຂໍທານຈາກຝູງຄົນທີ່ຜ່ານໄປມາ. ນີ້ເໝືອນກັບສະຖານທີ່ໆ ເຮົາອາດເຄີຍເຫັນໃນຊານເມືອງຂອງອະເມຣິກາ. ຂ້າພະເຈົ້າເວົ້າວ່າພວກເຮົາອາດຈະເຫັນ, ເພາະວ່າພວກເຮົາບໍ່ສົນໃຈທີ່ຈະເບິ່ງ. ເວລາທີ່ພວກເຮົາເດີນຜ່ານກັນ, ພວກເຮົາຫຼີກລ້ຽງທີ່ຈະຫລຽວເບິ່ງ.

ສັງເກດເບິ່ງຄວາມຈິງສອງຢ່າງຈາກເປໂຕແລະໂຢຮັນໃນການພົບກັບຄົນງ່ອຍຂໍທານຄົນນີ້.

- **ສິ່ງສຳຄັນຂອງແຕ່ລະບຸກຄົນ.** ເປໂຕແລະໂຢຮັນພຽງແຕ່ເຫັນ 3,000 ຄົນເຂົ້າມາຫາພຣະເຢຊູຄຣິດໃນວັນດຽວ. ແຕ່ພວກເພິ່ນຍັງເຫັນແລະເປັນຫ່ວງໃນແຕ່ລະບຸກຄົນ. ພວກເພິ່ນເຮັດເໝືອນດັ່ງທີ່ພຣະເຢຊູເຮັດ ໃນຂະນະນັ້ນພວກເພິ່ນເບິ່ງຄົນງ່ອຍເໝືອນກັບວ່າ ບໍ່ມີໃຜໃນໂລກສຳຄັນທໍ່ກັນກັບລາວ.
- **ທາງຄົບນຳໂອກາດມາໃຫ້.** ເໝືອນກັບເຮົາຂັບຣົດຜ່ານທາງສີ່ແຍກໂດຍບໍ່ໄດ້ເບິ່ງວ່າມີຫຍັງແດ່ຢູ່ຫັ້ນ. ພວກເຮົາໄດ້ພາດໄປບໍ່ໄດ້ສັງເກດບຸກຄົນທີ່ເຮົາພົບໃນແຕ່ລະວັນ. ພຣະເຈົ້າໄດ້ຈັດເຮົາໄວ້ໃນທາງນີ້ທີ່ເອີ້ນວ່າມີຊີວິດ. ພວກເຮົາຕ້ອງຮູ້ກັບບຸກຄົນຜູ້ທີ່ຜ່ານເຂົ້າມາໃນຊີວິດເຮົາແລະຜ່ານອອກໄປ.

ມາເຖິງຈຸດໆນີ້, ຄົນຂໍທານທີ່ບໍລິເວນພຣະວິຫານອາດມີຄວາມຮູ້ສຶກວ່າບໍ່ມີໃຜຈັກຄົນທີ່ສົນໃຈລາວ. ບໍ່ມີໃຜອີກ. ເປໂຕເວົ້າກັບລາວວ່າ, " ຈົ່ງເບິ່ງພວກເຮົາ." ເປໂຕຮູ້ຄວາມປາຖນາແລະຄວາມຕ້ອງການຂອງຊາຍຄົນນັ້ນ. ພວກເຮົາເຫັນທ່ານ. ທ່ານບໍ່ໄດ້ພາດໄປຈາກສາຍຕາຂອງພວກເຮົາ. ພວກເຮົາຕ້ອງການຊ່ວຍທ່ານ."

ຂອບຄຸນໃນຄວາມເຕັມໃຈຂອງເປໂຕແລະໂຢຮັນທີ່ປ່ຽນການເຂົ້າມາມີສ່ວນຂອງພຣະເຈົ້າໃຫ້ກາຍເປັນໂອກາດທີ່ບໍ່ສາມາດຢຸດຢັ້ງໄດ້. ຊີວິດຂອງຊາຍຄົນນີ້ກຳລັງຈະມີການປ່ຽນແປງ. ໄປຕລອດຊົ່ວນິຣັນ.

## 2. <u>ກິຈການ 3:5-8</u>:

*[5]ແລະຄົນນັ້ນໄດ້ລໍເບິ່ງ ນຶກວ່າຈະໄດ້ຮັບສິ່ງໜຶ່ງຈາກທ່ານ. [6]ແຕ່ເປໂຕໄດ້ກ່າວວ່າ, "ເງິນແລະຄຳເຮົາບໍ່ມີ ແຕ່ອັນທີ່ເຮົາມີຢູ່ນັ້ນເຮົາຈະໃຫ້ແກ່ເຈົ້າ ຄືໃນພຣະນາມແຫ່ງພຣະເຢຊູຄຣິດໄທນາຊາເຮັດຈົ່ງຍ່າງໄປ." [7]ແລ້ວເປໂຕຈັບມືເບື້ອງຂວາຜູ້ນັ້ນດຶງຂຶ້ນ ໃນທັນໃດນັ້ນຕີນແລະຂໍ້ຕີນຂອງລາວກໍມີແຮງມາ. [8]ລາວໄດ້ໂດດຢືນຂຶ້ນຍ່າງໄປມາ ແລ້ວເຂົ້າໄປໃນບໍລິເວນພຣະວິຫານພ້ອມກັນກັບທ່ານທັງສອງ ຍ່າງແລະເຕັ້ນພ້ອມສັຣເສີນພຣະເຈົ້າໄປ.*

ສຸພາສິດບູຮານກ່າວໄວ້ວ່າ, " ຂ້າພະເຈົ້າຄາດຫວັງວ່າຈະກ້າວຜ່ານໂລກນີ້ໄປແຕ່ຄັ້ງດຽວ. ດັ່ງນັ້ນ ສິ່ງໃດດີທີ່ຂ້າພະເຈົ້າເຮັດ, ຫຼືຄວາມເມດຕາທີ່ຂ້າພະເຈົ້າສາມາດສະແດງຕໍ່ເພື່ອນມະນຸດດ້ວຍກັນ, ໃຫ້ຂ້າພະເຈົ້າລົງມືເຮັດດຽວນີ້, ຢ່າໃຫ້ຂ້າພະເຈົ້າລະເລີຍແລະເມີນເສີຍ, ເພາະຂ້າພະເຈົ້າອາດຈະບໍ່ໄດ້ຜ່ານມາທາງນີ້ອີກ."

ຄຳເວົ້າເຫຼົ່ານີ້ສະທ້ອນໃຫ້ເຫັນທັສນະຄະຕິຂອງເປໂຕແລະໂຢຮັນທີ່ມຸ້ງຕົງໄປທີ່ຊາຍຂໍທານ ພວກເພິ່ນບໍ່ໄດ້ໃຊ້ເຫດຜົນຕັດສິນເໝືອນກັບຫຼາຍໆຄົນເຮັດເມື່ອເຂົາທັກທາຍກັບຄົນຂໍທານ: *ເຮົາບໍ່ມີເງິນ. ໃຫ້ຄົນອື່ນຊ່ວຍເຫຼືອສາ. ພີ່ນ້ອງຂອງລາວຄວນຊ່ອຍເຫລືອລາວ ລາວຄວນຫາງານເຮັດ.* ເປໂຕແລະໂຢຮັນເຫັນບຸກຄົນທີ່ຢູ່ໃນຄວາມຕ້ອງການແລະເຫັນຄວາມຕ້ອງການຂອງລາວເປັນໂອກາດທີ່ພຣະເຈົ້ານຳເຂົ້າມາສູ່ເສັ້ນທາງຂອງພວກເພິ່ນ.

*"ເປໂຕເວົ້າວ່າ, ເງິນແລະຄຳພວກເຮົາບໍ່ມີ, ແຕ່ອັນທີ່ເຮົາມີຢູ່ນັ້ນ, ເຮົາຈະໃຫ້ແກ່ເຈົ້າ: ໃນນາມຊື່ຂອງອົງພຣະເຢຊູຄຣິດໄທນາຊາເຮັດ, ຈົ່ງຢືນຂຶ້ນແລະຍ່າງໄປ!"* ເພິ່ນຈັບມືຂວາຊາຍງ່ອຍນັ້ນດຶງຂຶ້ນຢືນ. ຊາຍ, "ຜູ້ທີ່ເປັນງ່ອຍຕັ້ງແຕ່ເກີດ"( ຂໍ້ 2) ອາດຈະຄາດຫວັງວ່າລາວຈະລົ້ມລົງໃນທັນທີ; ແຕ່ຕີນແລະຂໍ້ຕີນຂອງລາວແຂງແຮງຊ່ວຍໃຫ້ລາວຢືນໄດ້ເປັນຢ່າງດີ.

ຈົ່ງຄິດເບິ່ງອາລົມທີ່ປັ່ນປ່ວນເກີດຂຶ້ນກັບຊາຍນັ້ນຊຶ່ງເປັນປະສົບການໃນຊີວິດ: ຄວາມຜິດຫວັງເມື່ອເປໂຕບອກກັບລາວວ່າລາວຈະບໍ່ໄດ້ເງິນ; ຄວາມຢ້ານກົວໃນຂະນະທີ່ດຶງໃຫ້ລຸກຢືນຂຶ້ນ; ແລະໃນທີ່ສຸດ, ລາວມີຄວາມຊື່ນຊົມຍິນດີຢ່າງລົ້ນເຫລືອເມື່ອລາວຫາຍດີເປັນປົກກະຕິ.

ຈົ່ງຄິດກ່ຽວກັບຄວາມຈິງເຫລົ່ານີ້ຍາມໃດກໍຕາມທີ່ທ່ານມີໂອກາດທີ່ຈະໃຫ້:

- **ເປໂຕແລະໂຢຮັນໃຫ້ໃນສິ່ງທີ່ພວກເພິ່ນມີ.** ພຣະເຈົ້າຈັດແຈ່ງໃຫ້ທຸກຢ່າງທີ່ເຮົາຕ້ອງການໃນການທຳງານຂອງພຣະອົງຢູ່ສເມີ; ບໍ່ສະນັ້ນ, ພຣະອົງຈະບໍ່ນຳພາເຮົາໄປໃນສະຖານທີ່ນັດພົບ. ແມ່ນແຕ່ເມື່ອຮູ້ສຶກວ່າຕົກຢູ່ໃນສະພາບຄັບຂັນ, ເຮົາສາມາດຢືນໝັ້ນໃນຄວາມເຊື່ອໄດ້.
- **ເປໂຕແລະໂຢຮັນເພິ່ງພາພຣະເຢຊູ.** ພວກອັຄສາວົກບໍ່ມີຣິດເດດໃນການປິ່ນປົວ; ພຣະເຢຊູເປັນຜູ້ປົວ. ເມື່ອພວກເພິ່ນເວົ້າວ່າ, "ໃນພຣະນາມແຫ່ງພຣະເຢຊູຄຣິດໄທນາຊາເຣັດຈົ່ງຢືນຂຶ້ນແລະຍ່າງໄປ," ພວກເພິ່ນຮັບຮູ້ວ່າແມ່ນຣິດເດດແລະສິດອຳນາດຂອງພຣະເຢຊູທີ່ປິ່ນປົວຊາຍຄົນນັ້ນ

ຖ້າພວກເຮົາມືນຕາເບິ່ງຄວາມຕ້ອງການຂອງຄົນທີ່ຢູ່ອ້ອມຮອບເຮົາ, ຊຶ່ງອາດຈະມີຢ່າງຫຼວງຫຼາຍເຊັ່ນ , ຄົນທີ່ມີບັນຫາສຸຂພາບ, ດ້ານອາຣົມ, ແລະທາງດ້ານຊີວິດຈິດວິນຍານທີ່ຕ້ອງການຄວາມຊ່ອຍເຫລືອມີຢູ່ທົ່ວທຸກບ່ອນ. ພວກເຮົາຈະເລີ່ມຕົ້ນຈາກທີ່ໃດ ແລະເຮົາຈະຊ່ອຍແກ້ບັນຫາເຫລົ່ານີ້ທີ່ຝັງເລິກຢ່າງໃດ?

## 3 <u>ກິຈການ 3: 9-10:</u>

*9ພົລເມືອງທັງຫລາຍໄດ້ເຫັນຜູ້ນັ້ນຍ່າງໄປມາສັຣເສີນພຣະເຈົ້າ. 10ຈຶ່ງຮູ້ວ່າເປັນຄົນນັ້ນທີ່ເຄີຍນັ່ງຂໍທານຢູ່ທີ່ປະຕູງາມແຫ່ງບໍຣິເວນພຣະວິຫານ ເຂົາຈຶ່ງພາກັນເຕັມໄປດ້ວຍຄວາມງຶດງໍ້ອັສຈັນໃຈເພາະເຫດການທີ່ເກີດຂຶ້ນແກ່ຄົນນັ້ນ.*

ພົລເມືອງທັງຫຼາຍຕອບສນອງດ້ວຍຄວາມຢ້ານຢຳແລະປລາດໃຈ. ຄວນຈະເປັນແນວນັ້ນ? ຊາຍທີ່ເຄີຍເປັນງ່ອຍຕັ້ງແຕ່ເກີດ. ເມື່ອຊາຍນັ້ນບໍ່ສາມາດຢືນໄດ້ຫຼືຍ່າງໄດ້ເປັນເວລາ " 40 ປີ" ( 4: 22 ) ລາວບໍ່ໄດ້ຫາຍດີຢ່າງກະທັນຫັນ. ດັ່ງນັ້ນເມື່ອພົລເມືອງເຫຼົ່ານັ້ນເຫັນຊາຍຄົນນີ້ຢືນ, ຍ່າງໄດ້, ແລະກະໂດດໂລດເຕັ້ນແລະຍ້ອງຍໍສັຣເສີນພຣະເຈົ້າ. ມັນຈຶ່ງເປັນຄວນສົນໃຈທີ່ຖືກຕ້ອງຂອງເຂົາ.

ຖ້າທ່ານອ່ານກິຈການບົດ 3 ທັງໝົດ ທ່ານຈະເຫັນເປໂຕສວຍໃຊ້ໂອກາດທີ່ຈະບອກຂ່າວເຣື່ອງພຣະເຢຊູຄຣິດຕໍ່ໝົດທຸກຄົນທີ່ເຂົ້າມາໃນພຣະວິຫານເພື່ອນະມັສການ. ໂອກາດອັນດຽວທີ່ບອກກັບຊາຍພຽງຄົນດຽວກ່ຽວກັບເຣື່ອງພຣະເຢຊູໄດ້ນຳໄປສູ່ອີກໂອກາດນຶ່ງ. ຜົນທີ່ຕາມມາ, ຈຳນວນຂອງຜູ້ຊາຍເທົ່ານັ້ນທີ່ເຊື່ອໄດ້ເພີ້ມເຂົ້າປະມານ 5,000 ຄົນ ( 4: 4 ). ມັນເປັນຜົນສະທ້ອນພຽງເລັກນ້ອຍ: ໂອກາດນຶ່ງໄດ້ນຳພາໄປສູ່ອີກໂອກາດນຶ່ງແລະອີກໂອກາດນຶ່ງຕໍ່ໄປ.

ແອດເວີດ ຄິມບອລ ໄດ້ສົນໃຈຊາຍໜຸ່ມຄົນນຶ່ງທີ່ມີອາຍຸ 17 ປີແລະໄດ້ຕັດສິນໃຈພະຍາຍາມເຂົ້າຫາລາວໃນນາມຊື່ຂອງພຣະເຢຊູ. ໃນຮ້ານຂາຍເກີບບ່ອນທີ່ຊາຍໜຸ່ມນັ້ນທຳງານ, ຄິມບອລໄດ້ນຳ ດວິກ ແອວ ມູດດີ ມາເຊື່ອໃນພຣະຄຣິດ. ມູດດີອາດຈະສືບຕໍ່ນຳອີກພັນຄົນໃຫ້ມາເຊື່ອໃນພຣະຄຣິດ, ໄດ້ສິ່ງຜົນສະທ້ອນຕໍ່ຄົນຕລອດຊ່ວງອາຍຸໃນສອງທະວີບ. ແອດເວີດ ຄິມບອລເປັນທັມມະດາ, ເຊັ່ນດຽວກັນກັບເປໂຕແລະໂຢຮັນແລະເຊັ່ນດຽວກັນກັບພວກເຮົາ. ພຣະເຈົ້າຈະນຳເອົາການກະທຳທີ່ເລັກນ້ອຍຂອງພວກເຮົາດ້ວຍການເຊື່ອຟັງແລະເພີ້ມທະວີຂຶ້ນຫຼາຍພັນເທົ່າ.

ຄຳຕອບວ່າ "ໂດຍ" ເທື່ອນຶ່ງຕໍ່ໂອກາດທີ່ພຣະເຈົ້າມອບໃຫ້ຕໍ່ໜ້າທ່ານ ສາມາດສິ່ງຜົນສະທ້ອນຕໍ່ໄປຢ່າງບໍ່ຢຸດຢັ້ງ. ຄຳຕອບວ່າ "ໂດຍ" ເທື່ອດຽວຈະນຳໂອກາດອື່ນໆ ມາຫາ. ເພາະວ່າເປໂຕແລະໂຢຮັນຕອບສນອງຕໍ່ຊາຍນັ້ນໃນເສັ້ນທາງເດີນຂອງພວກເພິ່ນ, ພວກເພິ່ນຈຶ່ງມີໂອກາດໄດ້ເທສນາສັ່ງສອນກຸ່ມປະຊາຊົນ ຄົນຈຳນວນຫລວງຫລາຍໄດ້ຕອບສນອງແລະໄດ້ນຳເອົາຫລາຍໆໂອກາດມາສູ່ການຮັບໃຊ້.

ໝາຍຄວາມຢ່າງໃດຕໍ່ທ່ານ? ທີ່ເວົ້າວ່າ “ໂດຍ”

## ນຳໃຊ້ໃນຊີວິດ.

**ທ່ານຈະເຮັດຢ່າງໃດກັບທາງຄົບແລະໂອກາດທີ່ເຂົ້າມາສູ່ທາງຂອງທ່ານໃນອາທິດນີ້? ຈົ່ງພິຈາຣະນາເບິ່ງຄຳແນະນຳເຫລົ່ານີ້.**

- **ຈົ່ງເບິ່ງ.** ຊອກຫາໂອກາດ. ຍອມໃຫ້ຕາຕະລາງເວລາຂອງທ່ານຂັດຂວາງ ເພື່ອທ່ານຈະໄດ້ຮັບໃຊ້ດ້ວຍການຟັງ, ການໃຫ້ຄຳໜູນໃຈ, ດ້ວຍການອະທິຖານກັບຄົນໃດຄົນນຶ່ງ, ຫຼືຕອບສນອງຄວາມຕ້ອງການ.

- **ຈົ່ງກ້າວອອກໄປ.** ຍຶດເອົາຂັ້ນຕອນການເຊື່ອຟັງທີ່ທ່ານລະເລີຍວ່າງບໍ່ດົນມານີ້. ຍອມຮັບການປ່ຽນແປງຢ່າງກະທັນຫັນຂອງຄວາມເຊື່ອແລະເຮັດທຸກສິ່ງຕາມທີ່ທ່ານຮູ້ວ່າພຣະເຈົ້າຊົງເອີ້ນໃຫ້ທ່ານເຮັດ.

- **ຈິດຊື່ເຂົ້າຮ່ວມ.** ທ່ານບໍ່ຈຳເປັນທີ່ຈະລໍຖ້າໂອກາດຕົກລົງໃສ່ຕັກຂອງທ່ານ ທີ່ຜ່ານທາງຄົບໃນຊີວິດຂອງທ່ານ. ຈົ່ງພິຈາຣະນາສົນທະນາກັບຄະນະຜູ້ນຳໃນຄຣິສຕະຈັກຂອງທ່ານແລະອາສາເຂົ້າຮ່ວມຮັບໃຊ້ຕາມໂອກາດທີ່ສອດຄ່ອງກັບຂອງພຣະຣາຊທານຂອງທ່ານ.

ການຕິດຕາມພຣະເຢຊູແມ່ນການຮັບໃຊ້ພຣະເຈົ້າຜູ້ມີອຳນາດສູງສຸດ ພຣະເຈົ້າທີ່ຮູ້ທຸກສ່ວນໃນຊີວິດຂອງທ່ານແລະຊີວິດຂອງທຸກຄົນ. ຊຶ່ງບໍ່ມີບ່ອນວ່າງຫຼາຍສຳລັບໂອກາດ. ດັ່ງນັ້ນ,ຈົ່ງພ້ອມທີ່ຈະຕອບສນອງເມື່ອໂອກາດຜ່ານເຂົ້າມາສູ່ທາງຊີວິດຂອງທ່ານ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ  ແປໂດຍ VR.**